ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 34 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 19 ສິງຫາ 2016


ສຳນັກງານ ຄຄຊ
ເລີ່ມ ເລກທີ 0829
ວັນທີ 22 AUG 2016
ໂທລະສັບ 021 217770


## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 08/08/2016 ຫາ 12/08/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງມະຫາວິທະຍາໄລມິຊິກັນຫຼຸດລົງເປັນ 90 ໃນເດືອນ 8/2016 ຈາກທີ່ຄາດໄວ້ວ່າຈະເພີ່ມຂຶ້ນເປັນ 91,5.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 05/08/2016 | ອາທິດນີ້ 12/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1146 | 1,1147 | -0,01% |
| ໂດລາ/ເຢນ | 100,93 | 102,19 | -1,23% |
| ໂດລາ/ບາດ | 34,820 | 34,810 | 0,03% |
| ໂດລາ/ເປໂຊ | 46,91 | 46,60 | 0,66% |
| ໂດລາ/ຣູເປັຍ | 13.125,00 | 13.120,00 | 0,04% |
| ໂດລາ/ໂດລາສິງກະໂປ | 1,3405 | 1,3463 | -0,43% |
| ໂດລາ/ຢວນ | 6,6433 | 6,6456 | -0,03% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,01% ຈາກ 44,51 ໂດລາ/ບາເຣວ ມາເປັນ 44,96 ໂດລາ/ບາເຣວ ພາຍຫຼັງປະເທດກຸ່ມຜູ້ສົ່ງອອກນ້ຳມັນດິບ (OPEC) ມີການເຈລະຈາບັນລຸຂໍ້ຕົກລົງຄົງທີ່ການຜະລິດນ້ຳມັນດິບ ເພື່ອຮັກສາລະດັບຂອງລາຄານ້ຳມັນ. ສຳລັບລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,83% ຈາກ 1.362,12 ມາເປັນ 1.337,15 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,06% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,31% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,47% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,74% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,90% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,45% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 2,57% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 05/08/2016 | | | ອາທິດນີ້ 12/08/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.084,91 | 8.115,00 | 8.098,58 | 8.081,15 | 8.115,00 | 8.093,43 | 0,05% | 0,00% | 0,06% |
| ບາດ | 232,78 | 234,44 | 233,32 | 233,72 | 234,15 | 234,04 | -0,40% | 0,13% | -0,31% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.109,75 | 8.138,40 | 8.124,08 | 8.110,53 | 8.145,15 | 8.127,84 | -0,01% | -0,08% | -0,05% |
| ບາດ | 233,43 | 234,23 | 233,83 | 234,40 | 235,48 | 234,94 | -0,42% | -0,53% | -0,47% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,31% | 0,29% | 0,31% | 0,36% | 0,37% | 0,43% | | | |
| ບາດ | 0,28% | -0,09% | 0,22% | 0,29% | 0,57% | 0,38% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 0,03% ທຽບໃສ່ວັນທີ 05/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 1,53%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,23% ເມື່ອທຽບໃສ່ວັນທີ 05/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,27%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 08-12/08/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 30,02 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 56,03 ລ້ານໂດລາ ແລະ ຂາຍໂດລາໄດ້ 26,01 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 991,76 ລ້ານບາດ (ໃນນີ້ ຊື້ບາດໄດ້ 195,59 ລ້ານບາດ ແລະ ຂາຍບາດໄດ້ 1.187,36 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 29,05% ແລະ ຫຼຸດລົງ 49,19% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 3 ລ້ານໂດລ້ານ ແລະ ເງິນບາດມີຈຳນວນ 4 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 3,40 ລ້ານໂດລາ ແຕ່ບໍ່ມີການຊື້-ຂາຍເງິນບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 0,25 ລ້ານໂດລາ ແລະ ຊື້ບາດສຸດທິ ຈຳນວນ 0,04 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 01-05/08/2016 | | ອາທິດທີ 08-12/08/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **71,31** | **556,55** | **56,03** | **195,59** | **-21,42%** | **-64,86%** |
| - ທ/ຄທຸລະກິດລັດ | 14,99 | 155,40 | 11,84 | 116,66 | -21,02% | -24,93% |
| - ທ/ຄທຸລະກິດອື່ນໆ | 56,32 | 401,15 | 44,20 | 78,94 | -21,53% | -80,32% |
| 2. ການຂາຍເງິນຕາຕ່າງປະເທດ | **44,33** | **2.165,49** | **26,01** | **1.187,36** | **-41,32%** | **-45,17%** |
| - ທ/ຄທຸລະກິດລັດ | 15,12 | 192,49 | 12,43 | 136,32 | -17,77% | -29,18% |
| - ທ/ຄທຸລະກິດອື່ນໆ | 29,21 | 1.973,00 | 13,58 | 1.051,04 | -53,51% | -46,73% |
| ຊື້-ຂາຍສຸດທິ ທທກ | **26,98** | **-1.608,94** | **30,02** | **-991,76** | **11,27%** | **-38,36%** |
| ຜິດດ່ຽງ ຊື້-ຂາຍ | 37,84% | -289,09% | 53,58% | -507,06% | 41,60% | 75,40% |
| ມູນຄ່າການຊື້-ຂາຍ | **115,63** | **2.722,04** | **82,05** | **1.382,95** | **-29,05%** | **-49,19%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-7,84** | **-19,00** | **-3,40** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 50,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 7,84 | 69,00 | 3,40 | 0,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,03** | **5,00** | **3,00** | **4,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0,05** | **0,02** | **0,25** | **0,04** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 0,02 | 0,28 | 0,04 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,01 | 0,00 | 0,02 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 08/2016 ຢູ່ໃນລະດັບ 2,15% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,18% ຈາກ 1,97% ໃນເດືອນ 07/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 86,8 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 90,8% ທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 766 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 16% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 316,28 ຕື້ກີບ ຫຼຸດລົງ 40,33% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (05-11/08/2016) ມີຈໍານວນ 1.983 ຄັ້ງ ໂດຍມີມູນຄ່າ 454,62 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 500 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.004,08 ຈຸດ ຫຼຸດລົງ 0,88% ເມື່ອທຽບໃສ່ອາ ທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 171.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 849,84 ລ້ານກີບ ເພີ່ມຂຶ້ນ 64,16% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 72,92% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.678 ກີບ/ຮຸ້ນ ຫຼຸດລົງ 28 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 27,13 ລ້ານກີບ ຫຼຸດລົງ 82,69% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 31,70% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,32%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.963 ກີບ/ຮຸ້ນ ຫຼຸດລົງ 68 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 165.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 819,95 ລ້ານກີບ ເພີ່ມຂຶ້ນ 141,08% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 74,75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.400 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ເມື່ອທຽບ ໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,64 ລ້ານ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງ LWPC. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,5 ລ້ານກີບ ເພີ່ມຂຶ້ນ 47,06% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 12,50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,62 ລ້ານກີບ ຫຼຸດລົງ 96,88% ເມື່ອທຽບໃສ່ອາທິດທີ່ຜ່ານມາ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການ: ❶ເດີນທາງໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ທີ່ປະເທດລັດເຊຍ, ❷ເປັນປະທານກອງປະຊຸມສ່ອງແສງສາຍພັກປະຈໍາເດືອນ ກໍລະກົດ 2016 ທີ່ ທຫລ, ❸ເປັນປະທານກອງປະຊຸມການມອບຂໍ້ທ່າງອນ ກັບ ສູນເກັບຊື້ໜີ້ ທີ່ ທຫລ, ❹ເປັນປະທານກອງປະຊຸມຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ ທຫລ, ❺ຮັບການເຂົ້າຢ້ຽມຂໍ່ານັບຈາກສະມະຄົມທະນາຄານທຸລະກິດໄທ ທີ່ ທຫລ;

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສໍາເລັດການຕ້ອນຮັບທ່ານ Jonathan Dunn ຫົວໜ້າຫ້ອງການຜູ້ຕາງໜ້າ IMF ປະຈໍາ ສປປ ລາວ ແລະ ສສ.ຫວຽດນາມ ທີ່ໄດ້ມາຢ້ຽມຢາມ ສປປ ລາວ ໃນການປຶກສາຫາລືກະກຽມຄວາມພ້ອມໃນການຕ້ອນຮັບທ່ານ ຜູ້ອໍານວຍການໃຫຍ່ IMF ທີ່ຈະເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ;

- ສໍາເລັດການຈັດ: ❶ກອງປະຊຸມທາງໄກ (Teleconference) ເພື່ອກະກຽມໃຫ້ແກ່ການທົດລອງກູ້ຢືມເງິນກອງທຶນ CMIM ຄັ້ງທີ 7 ທີ່ ທຫລ, ❷ສໍາເລັດການຈັດກອງປະຊຸມປຶກສາຫາລືວຽກງານທີ່ຕິດພັນກັບຕະຫຼາດຫຼັກຊັບລາວ ປະຈໍາໄຕມາດ II ປີ;

- ສໍາເລັດການເຂົ້າຮ່ວມ: ❶ສໍາມະນາໃນຫົວຂໍ້: “Course on Bank Business, Governance and Risk Management” ທີ່ ສສ.ຫວຽດນາມ, ❷ກອງປະຊຸມສໍາມະນາ ໃນຫົວຂໍ້: “IMF-Technical Assistance Office for the Lao PDR and the Republic of the Union of Myanmar (TAOLAM) ທີ່ ໂຮງແຮມແລນມາກ; ❸ກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ II ທີ່ປະເທດອິນໂດເນເຊຍ, ❹ຮັບຟັງການເຜີຍແຜ່ກ່ຽວກັບການໃຫ້ທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ພາຍໃຕ້ທຶນຂອງລັດຖະບານຍີ່ປຸ່ນ ທີ່ ທຫລ, ❺ຝຶກອົບຮົມໄລຍະສັ້ນ ໃນຫົວຂໍ້: “Public-Private Partnership” ທີ່ ສູນຝຶກອົບຮົມລາວ-ສິງກະໂປ.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກະກຽມການ: ❶ເດີນທາງໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ທີ່ປະເທດລັດເຊຍ, ❷ເຂົ້າຮ່ວມພິທີປະດັບຫຼຽນຄໍາ ທີ່ຫ້ອງວ່າການສູນກາງພັກ, ❸ເຂົ້າຮ່ວມເປັນປະທານພິທີເປີດທະນາຄານ RHB ສາຂາສີຖານເໜືອ, ❹ຮັບການເຂົ້າຢ້ຽມຂໍ່ານັບປະທານສະພາບໍລິຫານ ກຸ່ມທະນາຄານ RHB ເບີຮາດ ທີ່ ທຫລ, ❺ເຂົ້າຮ່ວມກອງປະຊຸມຄົບຄະນະຂອງ ກໍາມະທິການແຜນການ, ການເງິນ ແລະ ການກວດສອບ ປະຈໍາປີ 2016 ທີ່ສະພາແຫ່ງຊາດ, ❻ເຂົ້າຮ່ວມອວຍພອນປະທານສູນກາງແນວລາວສ້າງຊາດ ທີ່ແນວລາວສ້າງຊາດ;

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກໍານົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;

- ສືບຕໍ່ສ້າງປື້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;

- ສືບຕໍ່ກະກຽມຈັດກອງປະຊຸມຄົ້ນຄວ້າ ເພື່ອປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຈຸດປະສານງານຮັບຜິດຊອບສະເພາະວຽກ AML/CFT;

- ກະກຽມເຂົ້າຮ່ວມກອງປະຊຸມສຸດຍອດດ້ານກົດລະບຽບຂອງອາຊຽນ ຄັ້ງທີ 2 (ASEAN Regulatory Summit) ທີ່ປະເທດສິງກະໂປ;

- ສືບຕໍ່: ❶ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈໍາປີ 2016, ❷ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈໍາປີ 2016.

ຮ. ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ສຸກັນ ຈັນທະວົງ